ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງໄຊສົມບູນ

ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ                    ເລກທີ....317.... /ພປທສ.ຊບ

ໄຊສົມບູນ, ວັນທີ ..12...ກໍລະກົດ 2017

# ແຈ້ງການ

ເຖິງ: ພະນັກງານລັດຖະກອນ, ທະຫານ, ຕໍາຫຼວດ, ນັກຮຽນ-ນັກສຶກສາ, ພໍ່ຄ້າ-ຊາວຂາຍ, ຕະຫຼອດຮອດ ພໍ່ແມ່ປະຊາຊົນ ບັນດາເຜົ່າ ໃນຂອບເຂດເທດສະບານແຂວງໄຊສົມບູນ.

ເລື່ອງ: ເປີດສອນຄອມພິວເຕີ ພາກຄໍ່າ ຊຸດໃໝ່.

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ, ສະບັບເລກທີ 138/ ປທສ, ລົງວັນທີ 20 ມັງກອນ 2012 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກ ປທສ ແຂວງ/ ນະຄອນຫຼວງ;
- ເພື່ອເປັນການພັດທະນາຄວາມຮູ້, ຄວາມສາມາດ ດ້ານໄອຊີທີ ໃຫ້ພະນັກງານລັດຖະກອນ, ທະຫານ, ຕໍາຫຼວດ, ນັກຮຽນ-ນັກສຶກສາ, ພໍ່ຄ້າ-ຊາວຂາຍ ຂອງແຂວງໄຊສົມບູນ ໃຫ້ນັບມື້ນັບສູງຂຶ້ນ ແລະ ທ່ວງທັນກັບການພັດທະນາ ອຸດສາຫະກໍາ ໄອທີ ໃນຍຸກປັດຈຸບັນ.

ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງໄຊສົມບູນ ຂໍຖືເປັນກຽດແຈ້ງຍັງ ພະນັກງານ-ລັດຖະກອນ, ທະຫານ, ຕໍາຫຼວດ, ນັກຮຽນ-ນັກສຶກສາ, ພໍ່ຄ້າ-ຊາວຂາຍ, ຕະຫຼອດຮອດ ພໍ່ແມ່ປະຊາຊົນບັນດາເຜົ່າ ໃນພາຍ ໃນຂອບເຂດເທດສະບານ ແຂວງໄຊສົມບູນ ໄດ້ຮັບຊາບວ່າ, ສູນບໍລິການ ຂໍ້ມູນຂ່າວສານ ແບບເອເລັກໂຕຣນິກ ພະແນກ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງໄຊສົມບູນ ຈະເປີດສອນ ຄອມພິວເຕີ ພາກຄໍ່າຊຸດໃໝ່, ເຊິ່ງເປີດຮັບ ສະໝັກ ນັບແຕ່ວັນທີ 13 - 30 ກໍລະກົດ 2017 ເປັນຕົ້ນໄປ ແລະ ເລີ່ມຮຽນ ວັນທີ 1 ສິງຫາ 2017, ມີຫ້ອງຮຽນທີ່ໄດ້ ມາດຕະຖານ ສາມາດບັນຈຸໄດ້ 16 ຄົນ / 1 ຊຸດ, ມີລະບົບເຄືອຂ່າຍ, ອິນເຕີເນັດ ໃຫ້ບໍລິການໄດ້ຕະຫຼອດ 24 ຊົ່ວໂມງ, ມີ ອາຈານສອນ ທີ່ມີຄວາມຮູ້ ແລະ ປະສົບການຫຼາຍທ່ານ, ພາຍຫຼັງສໍາເລັດການຮຽນແມ່ນທາງພະແນກພວກເຮົາ ຈະມີໃບ ຢັ້ງຢືນໃຫ້ພ້ອມ, ລາຍລະອຽດມີຫົວຂໍ້ ແລະ ຄ່າລົງທະບຽນຮຽນ ດັ່ງນີ້:

1. ການນໍາໃຊ້ ໂປຣແກຣມ Microsoft Office (Word, Excels ແລະ Power Point ) 2013 ຄ່າລົງທະບຽນຮຽນ 180,000 ກີບ (ໜຶ່ງຮ້ອຍແປດສິບພັນກີບ) / 1 ຄົນ, ກໍານົດຮຽນ 60 ຊົ່ວໂມງ.
2. ການແກ້ໄຂບັນຫາຄອມພິວເຕີ, ການລົງວິນໂດ ແລະ ການລົງໂປຣແກຣມຕ່າງໆ ຄ່າລົງທະບຽນຮຽນ 180,000 ກີບ (ໜຶ່ງຮ້ອຍແປດສິບພັນກີບ) / 1 ຄົນ, ກໍານົດຮຽນ 45 ຊົ່ວໂມງ.
3. ການຕົບແຕ່ງຮູບພາບດ້ວຍ Photoshot Cs6 ຄ່າລົງທະບຽນຮຽນ 180.000 ກີບ (ໜຶ່ງຮ້ອຍແປດສິບພັນກີບ) ຕໍ່ 1 ຄົນ, ກໍານົດຮຽນ 45 ຊົ່ວໂມງ.

- **ສະຖານທີ່ຮຽນ**: ຕັ້ງຢູ່ສຳນັກງານປົກຄອງເມືອງອະນຸວົງ ແຂວງໄຊສົມບູນ, ໄກ້ກັບຂາເຂົ້າ-ຂາອອກ ຫ້ອງວ່າການປົກຄອງເມືອງອະນຸວົງ, ສົນໃຈສາມາດຕິດຕໍ່ພົວພັນໄດ້ ໃນໂມງລັດຖະການ ເບີໂທ: **026 210015, 5577 7071, 9515 5559.**

- **ໝາຍເຫດ**: ຖ້າຫາກຜູ້ໃດ ລະດົມ ຫຼື ແນະນຳ ໝູ່ຄູ່ມາຮຽນດ້ວຍກັນ ຈຳນວນ 5 ຄົນຂຶ້ນໄປ ຈະມີສ່ວນຫຼຸດ 50% ໃຫ້ຜູ້ນັ້ນ ແລະ ຖ້າ 10 ຄົນຂຶ້ນໄປ ແມ່ນໄດ້ຮຽນຟຣີ (ບໍ່ເສຍຄ່າຮຽນ).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານ ຜູ້ທີ່ສົນໃຈ ເພື່ອເຂົ້າຮຽນ ຕາມແຈ້ງການນີ້ດ້ວຍ.

ດ້ວຍຄວາມນັບຖືຢ່າງສູງ.

ຫົວໜ້າພະແນກ ປທສ ແຂວງໄຊສົມບູນ

ຄຳຊຸ່ກ ຕົງສະໄໝ